ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກອງເລຂາຄະນະກໍາມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ
# ຄະນະກໍາມະການປະສານງານກອງທຶນໂລກ

ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 04 ຂອງສົກປີ 2019-2020 ໃນວັນພຸດ ທີ 23 ກັນຍາ 2020 ເວລາ 13:30 ຫາ 16:30 ທີ່ຫ້ອງປະຊຸມຊັ້ນ 1 ກະຊວງສາທາລະນະສຸກ ໂດຍການເປັນປະທານຮ່ວມຂອງ ທ່ານ ນາງ ດຣ. ສຸລານີ ຈັນສີ, ຮອງຫົວໜ້າກອງສົ່ງເສີມສຸຂະພາບຊຸມຊົນ ອົງການກາແດງລາວ ທັງເປັນຮອງປະທານຄະນະກໍາມະການປະສານງານກອງທຶນໂລກ ແລະ ທ່ານ ດຣ Mark  Jacobs, ຜູ້ຕາງໜ້າອົງການອະນາໄມໂລກ ປະຈໍາ ສປປ ລາວ ທັງເປັນຮອງປະທານຄະນະກໍາມະການປະສານງານກອງທຶນໂລກ.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນຜູ້ເຂົ້າຮ່ວມເຊັ່ນ: ສະມາຊິກ ແລະ ຕົວແທນ ຂອງຄະນະກໍາມະການປະສານງານກອງທຶນໂລກ (CCM) ຈໍານວນ 18 ທ່ານ (ມີສິດອອກສຽງໄດ້ 17 ທ່ານ) ແລະ ພາກສ່ວນອື່ນໆຈໍານວນ 19 ທ່ານ ເຊິ່ງຕາງໜ້າຈາກ ຄະນະກໍາມະການກວດກາຂອງ CCM, ຄະນະກໍາມະການຂົນຂວາຍແຫຼ່ງທຶນຂອງ CCM, ຫົວໜ້າກົມແຜນການ ແລະ ຮ່ວມມື ກະຊວງສາທາລະນະສຸກ, ຜູ້ຕາງໜ້າຈາກໂຄງການ 3 ພະຍາດ, ໜ່ວຍງານບໍລິຫານຄຸ້ມຄອງໂຄງການກອງທຶນໂລກ, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM, ລວມທັງໝົດ 37 ທ່ານ.

## I. ວາລະກອງປະຊຸມ:

1. ທົບທວນແລະພິຈາລະນາເພື່ອຮັບຮອງເອົາຂໍ້ກໍານົດດ້ານຈັນຍາບັນຂອງສະມາຊິກຄະນະກໍາມະການປະສານງານກອງທຶນໂລກ;
2. ລາຍງານຄວາມຄືບໜ້າແລະເອກະສານໃນການກະກຽມເຊັນສັນຍາການຊ່ວຍເຫຼືອທຶນຮອບໃໝ່ຂອງກອງທຶນໂລກໃຫ້ແກ່ 3 ແຜນງານ (ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ);
3. ທົບທວນແລະປະກອບຄໍາເຫັນຕໍ່ບົດລາຍງານຂອງການລົງຕິດຕາມກວດກາວຽກງານ ທີ່ແຂວງສະຫວັນນະເຂດ ລະຫວ່າງວັນທີ 27-30 ກໍລະກົດ 2020.
4. ບັນຫາອື່ນໆ:

## II. ສະຫຼຸບສັງລວມບັນດາຈຸດສໍາຄັນຂອງກອງປະຊຸມ:

ກ່ອນຈະກ້າວເຂົ້າວາລະກອງປະຊຸມ ກອງເລຂາ CCM ໄດ້ຢືນຢັນອົງປະກອບຂອງກອງປະຊຸມແມ່ນພຽງພໍ ແລະ ໄດ້ກໍານົດຂໍ້ຂັດແຍ້ງດ້ານຜົນປະໂຫຍດ (COI) ສໍາລັບວາລະທີ່ 2 ຄືມີຜູ້ຕາງໜ້າຈາກໂຄງການ HPA ແມ່ນບໍ່ສາມາດລົງຄະແນນສຽງເພື່ອຮັບຮອງເອກະສານໃນການກະກຽມເຊັນສັນຍາການຊ່ວຍເຫຼືອທຶນຮອບໃໝ່ຂອງກອງທຶນໂລກໃຫ້ແກ່ໂຄງການໄຂ້ຍຸງ (RAI3E) ຍ້ອນວ່າ HPA ໄດ້ຖືກຄັດເລືອກໃຫ້ເປັນ SR ສໍາລັບທຶນຊ່ວຍເຫຼືອດັ່ງກ່າວ. ພ້ອມດຽວກັນນີ້ ກອງເລຂາ CCM ກໍ່ໄດ້ລາຍງານຕໍ່ກອງປະຊຸມກ່ຽວກັບການຕິດຕາມການຈັດຕັ້ງປະຕິບັດໜ້າວຽກຕາມທີ່ໄດ້ຕົກລົງກັນໃນກອງປະຊຸມ CCM ຄັ້ງວັນທີ 27 ພຶດສະພາ 2020 ເຊັ່ນ:

- ສະມາຊິກ CCM ໄດ້ເປັນເອກກະສັນຮັບຮອງເອົາຮ່າງບົດສະເໜີຂໍທຶນຈາກກອງທຶນໂລກເພື່ອນຳໃຊ້ເຂົ້າໃນວຽກງານຕ້ານພະຍາດ COVID-19 ແລະ ໄດ້ສົ່ງໃຫ້ກອງທຶນໂລກພາຍໃນວັນທີ 31 ພຶດສະພາ 2020;
- ບັນດາເອກະສານທີ່ຕ້ອງການຈາກຄະນະກຳມະການກວດກາດ້ານວິຊາການຂອງກອງທຶນໂລກ (TRP) ກ່ຽວກັບບົດສະເໜີຂໍທຶນຮ່ວມລະຫວ່າງແຜນງານຕ້ານເຮສໄອວີ ແລະ ວັນນະໂລກ ສຳລັບ ສປປ ລາວ ເພື່ອດຳເນີນຂັ້ນຕອນການຕົກລົງໃຫ້ທຶນຊ່ວຍເຫຼືອແມ່ນໄດ້ສົ່ງໄປໃຫ້ (TRP) ທັນຕາມກຳນົດເວລາ.

**ວາລະກອງປະຊຸມທີ 1: ທົບທວນແລະພິຈາລະນາເພື່ອຮັບຮອງເອົາຂໍ້ກຳນົດດ້ານຈັນຍາບັນຂອງສະມາຊິກຄະນະກຳມະການປະສານງານກອງທຶນໂລກ**

ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຈາກກອງເລຂາ CCM ແລະ ຜູ້ຕາງໜ້າຈາກຄະນະກຳມະການ CCM ແລະ OC ຊຶ່ງເປັນຜູ້ທີ່ມີປະສົບການທາງດ້ານຂໍ້ກຳນົດດ້ານຈັນຍາບັນ ໄດ້ນຳສະເໜີຂໍ້ກຳນົດດ້ານຈັນຍາບັນຂອງສະມາຊິກຄະນະກຳມະການປະສານງານກອງທຶນໂລກຕໍ່ກອງປະຊຸມ ແລະ ໃນທີ່ປະຊຸມໄດ້ມີຄຳເຫັນດັ່ງລຸ່ມນີ້:

- ບົດສະເໜີໄດ້ສະຫຼຸບຈຸດສຳຄັນຂອງຂໍ້ກຳນົດດ້ານຈັນຍາບັນ ຊຶ່ງໄດ້ອະທິບາຍເຖິງວິທີການປະພຶດແລະປະຕິບັດໜ້າທີ່ຂອງສະມາຊິກສົມບູນ ແລະ ສຳຮອງຂອງ CCM ແລະ ພະນັກງານກອງເລຂາ CCM ແຕ່ລະຄົນ ເພື່ອຈະປະຕິບັດໜ້າທີ່ຂອງຕົນຢ່າງມີປະສິດຕິຜົນ. ສະມາຊິກສົມບູນ ແລະ ສຳຮອງຂອງ CCM ແມ່ນຈຳເປັນຕ້ອງໃຫ້ໄດ້ຄຸ້ນເຄີຍກັບລາຍລະອຽດເພີ່ມເຕີມກ່ຽວກັບຂໍ້ກຳນົດດັ່ງກ່າວນີ້;
- ໄດ້ມີການສົນທະນາແລະປຶກສາຫາລື ຄຳເຫັນແລະຂໍ້ສົນໃຈກ່ຽວກັບເນື້ອໃນຂອງຂໍ້ກຳນົດ ເຊັ່ນວ່າ ເປັນຫຍັງຂໍ້ກຳນົດດ້ານຈັນຍາບັນຈຶ່ງຈຳເປັນຕ້ອງເຮັດໃນເວລານີ້ ແລະ ຂໍ້ກຳນົດນີ້ຄວນຈະໄດ້ຮັບການພິຈາລະນາທົບທວນໂດຍຄະນະກຳມະການດ້ານຈັນຍາບັນການແພດກ່ອນ. ສຸດທ້າຍ, ກອງປະຊຸມກໍ່ໄດ້ຮັບຮູ້ວ່າມັນເປັນຂໍ້ກຳນົດແລະເງື່ອນໄຂຂອງກອງທຶນໂລກ ເຊິ່ງບັນດາສະມາຊິກ CCM ທັງໝົດ (ບໍ່ແມ່ນແຕ່ສະເພາະ ສປປ ລາວ ເທົ່ານັ້ນ) ທີ່ຕ້ອງການສະເໜີຂໍທຶນຈາກກອງທຶນໂລກຕ້ອງໄດ້ປະຕິບັດຂໍ້ກຳນົດດັ່ງກ່າວນີ້. ຄວາມຈິງແລ້ວ, ພວກເຮົາໄດ້ປະຕິບັດມາແລ້ວ ແລະ ມີປະສົບການແລ້ວ ໃນຫຼັກການດ້ານຈັນຍາບັນເຊິ່ງລະບຸໄວ້ໃນຂໍ້ກຳນົດນີ້. ບັນດາຜູ້ໃຫ້ທຶນຕ່າງໆກໍໄດ້ມີຂໍ້ກຳນົດດ້ານຈັນຍາບັນສະເພາະເໝືອນກັນ.
- ສະມາຊິກ CCM ໄດ້ຮັບຮອງເອົາຂໍ້ກຳນົດດ້ານຈັນຍາບັນຂອງກອງທຶນໂລກ ດ້ວຍຄະແນນສຽງສ່ວນຫຼາຍ ເພື່ອເປັນຫຼັກການທົ່ວໄປໃນການປະຕິບັດໜ້າທີ່ ແລະ ການຕັດສິນໃຈຂອງ CCM;
- ສະມາຊິກ CCM ບໍ່ມີການຄັດຄ້ານການຕໍ່ການສະເໜີແຕ່ງຕັ້ງ ທ່ານ ດຣ. ຄ□ແພງ ພົງລີຊາ ເປັນຈຸດປະສານງານດ້ານຈັນຍາບັນຂອງ CCM ສປປ ລາວ;
- ຮ່າງໜັງສືແຈ້ງກ່ຽວກັບການເຫັນດີປະຕິບັດຕາມຂໍ້ກຳນົດດ້ານຈັນຍາບັນແມ່ນໄດ້ຖືກຮັບຮອງເອົາເປັນສະບັບສຸດທ້າຍໂດຍມີການປັບປຸງເລັກນ້ອຍ;
- ສະມາຊິກສົມບູນ ແລະ ສຳຮອງຂອງ CCM ແລະ ພະນັກງານກອງເລຂາ CCM ຕ້ອງໄດ້ເຂົ້າເຮັດການອົບຮົມກ່ຽວກັບຈັນຍາບັນ ຜ່ານ Website ຂອງກອງທຶນໂລກໃຫ້ສຳເລັດພາຍໃນທ້າຍປີ 2020.

**ວາລະກອງປະຊຸມທີ 2: ລາຍງານຄວາມຄືບໜ້າແລະເອກະສານໃນການກະກຽມເຊັນສັນຍາການຊ່ວຍເຫຼືອທຶນຮອບໃໝ່ຂອງກອງທຶນໂລກໃຫ້ແກ່ 3 ແຜນງານ (ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ)**

ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຈາກຜູ້ຕາງໜ້າ PR PMU ແລະ PR UNOPS ໄດ້ລາຍງານຄວາມຄືບໜ້າ ແລະເອກະສານໃນການກະກຽມເຊັນສັນຍາການຊ່ວຍເຫຼືອທຶນຮອບໃໝ່ຂອງກອງທຶນໂລກໃຫ້ແກ່ 3 ແຜນງານ (ພະຍາດເອດ, ວັນນະໂລກ (LAO-C-MOH) ແລະ RAI3E) ສຳລັບໄລຍະປີ 2021-2023 ໃນ ສປປ ລາວ ຕໍ່ກອງປະຊຸມແລ້ວ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນແລະມີການສົນທະນາ ເຊິ່ງສຳລວມໄດ້ດັ່ງລຸ່ມນີ້:

1. **ທຶນຊ່ວຍເຫຼືອຮ່ວມສຳລັບໂຄງການຕ້ານເອດ ແລະ ຄວບຄຸມວັນນະໂລກ**

- ສັນຍາຮ່ວມດ້ານການເງິນລະຫວ່າງລັດຖະບານ ສປປ ລາວ ແລະ ສະມາຄົມພັດທະນາສາກົນກ່ຽວກັບໂຄງການ HANSA ໄດ້ເຊັນກັນໃນເດືອນເມສາ 2020;
- ສັນຍາຮ່ວມມືລະຫວ່າງທະນາຄານໂລກ ແລະ ກອງທຶນໂລກກ່ຽວກັບໂຄງການ HANSA ຈະໄດ້ຮັບການລົງນາມຫລັງຈາກມີຄວາມຊັດເຈນກ່ຽວກັບໂຄງຮ່າງຂອງການຈັດຕັ້ງປະຕິບັດ;
- ການເຊັນຢັ້ງຢືນທຶນຊ່ວຍເຫຼືອລະຫວ່າງກອງທຶນໂລກ ແລະ ກະຊວງສາທາລະນະສຸກກ່ຽວກັບທຶນຊ່ວຍເຫຼືອຮ່ວມໂຄງການ ຕ້ານເອດ ແລະ ຄວບຄຸມວັນນະໂລກ ແມ່ນກຳລັງດຳເນີນຢູ່. ຄາດວ່າທຶນດັ່ງກ່າວນີ້ ຈະໄດ້ຮັບການເບີກຈ່າຍໃຫ້ປະເທດເຮົາ ພາຍໃນເດືອນມັງກອນປີ 2021;
- ກະຊວງສາທາລະນະສຸກຈະນຳເອົາທຶນຊ່ວຍເຫລືອລ້າທັງໝົດ ເຂົ້າໃນແຜນການໂດຍລວມຂອງຂະແໜງສາທາລະນະສຸກ ຊຶ່ງເປັນການປະກອບສ່ວນຂອງຜູ້ໃຫ້ທຶນເພື່ອບັນລຸເປົ້າໝາຍ SDG ຂອງລັດຖະບານ.

## 2. ທຶນຊ່ວຍເຫຼືອສຳລັບໂຄງການ RAI3E

- ການສົນທະນາກ່ຽວກັບການປະຕິບັດຄຳໝັ້ນສັນຍາທຶນປະກອບສ່ວນຂອງລັດຖະບານຈຳນວນ 1,448,207 ໂດລາ ໄດ້ແກ່ຍາວເວລາດົນສົມຄວນ, ເຊິ່ງໄດ້ມີການຈັດສັນຈຳນວນທີ່ແຕກຕ່າງກັນພາຍໃນສາມປີໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໂຄງການ ແລະ ການປະກອບສ່ວນຂອງຜູ້ໃຫ້ທຶນຈາກຫຼາຍພາກສ່ວນເພື່ອຮັບປະກັນບໍ່ໃຫ້ມີຊ່ອງຫວ່າງໃນໂຄງການ. ຜູ້ເຂົ້າຮ່ວມບາງທ່ານກໍ່ໄດ້ສະແດງເຖິງຄວາມເປັນກ່ຽວກັບທຶນປະກອບສ່ວນຂອງລັດຖະບານທີ່ມີອັດຕາສ່ວນສູງພາຍໃນໜຶ່ງປີ ເຊິ່ງລັດຖະບານອາດຈະບໍ່ສາມາດສະໜອງງົບປະມານໃຫ້ພຽງພໍຕາມແຜນການ ເນື່ອງຈາກວ່າມີບຸລິມະສິດແລະຄຳໝັ້ນສັນຍາອື່ນໆ ແລະ ຄວາມບໍ່ແນ່ນອນດ້ານເສດຖະກິດຍ້ອນການແຜ່ລະບາດຂອງພະຍາດ Covid-19. ໄດ້ມີການແນະນຳວ່າການຈັດສັນທຶນປະກອບສ່ວນໃນແຕ່ລະປີຄວນມີຄວາມສົມດູນກັນ. ຜູ້ຕາງໜ້າ PR UNOPS ໄດ້ເຫັນດີຕໍ່ການແນະນຳກ່ຽວກັບການຈັດແບ່ງທຶນປະກອບສ່ວນຂອງລັດຖະບານໂດຍສະເລ່ຍໃນແຕ່ລະປີໃນໄລຍະ 3 ປີ ແລະ ຈະໄດ້ປຶກສາຮ່ວມກັບ CMPE ອີກຕື່ມວ່າກິດຈະກຳໃດທີ່ສາມາດສັບປ່ຽນກັນໄດ້ລະຫວ່າງແຜນການເງິນປະກອບສ່ວນຂອງລັດຖະບານ ແລະ ທຶນຊ່ວຍເຫຼືອຂອງໂຄງການ RAI3E.
- ຍັງມີການປະກອບຄຳຄິດຄຳເຫັນກ່ຽວກັບເງິນເດືອນ ຫຼື ການສະໜັບສະໜູນດ້ານວັດຖຸອຸປະກອນໃຫ້ພະນັກງານລັດຖະກອນ ກໍ່ໃຫ້ສາມາດຄິດໄລ່ເປັນການປະກອບສ່ວນດ້ານການເງິນຂອງລັດຖະບານ. ຜູ້ຕາງໜ້າ PR UNOPS ໄດ້ຊີ້ແຈງວ່າການສະໜັບສະໜູນດັ່ງກ່າວ ກອງທຶນໂລກຈະບໍ່ໄດ້ພິຈາລະນາເປັນການປະກອບສ່ວນດ້ານການເງິນຂອງລັດຖະບານ. ສຳລັບກອງທຶນໂລກ ແມ່ນຈະຖືເອົາການປະກອບສ່ວນເປັນຈຳນວນເງິນຂອງລັດຖະບານທີ່ໄດ້ປະກອບສ່ວນໂດຍກົງເຂົ້າໃນກິດຈະກຳຂອງໂຄງການຕ້ານແລະສະກັດກັ້ນໄຂ້ຍຸງ.
- ສະມາຊິກ CCM ບາງທ່ານກໍ່ໄດ້ສະເໜີວ່າການຮັບຮອງເອົາເອກະສານທຶນຊ່ວຍເຫຼືອໂຄງການ RAI3E ສຳລັບຈຳນວນທຶນປະກອບສ່ວນຂອງລັດຖະບານຄວນຈະຕ້ອງເປັນຕົວເລກສຸດທ້າຍ ຖ້າວ່າຈະມີການປ່ຽນແປງຈຳນວນໃດນຶ່ງຂອງທຶນປະກອບສ່ວນນີ້. PR UNOPS ຕ້ອງໄດ້ປຶກສາຫາລືກັບໂຄງການແຫ່ງຊາດຕື່ມອີກເພື່ອປະກອບເອກະສານໃນການກະກຽມເຊັນສັນຍາທຶນຊ່ວຍເຫຼືອໂຄງການ RAI3E (2021-2023) ໃຫ້ສຳເລັດ ໂດຍສະເພາະແມ່ນການຊຳລະເງິນປະກອບສ່ວນຂອງລັດຖະບານເຂົ້າໃນໂຄງການໃນແຕ່ລະປີ;
- ສຸດທ້າຍ, ສະມາຊິກ CCM ໄດ້ຮັບຮອງເອົາໂດຍຄະແນນສຽງສ່ວນຫຼາຍ ແຜນການແລະງົບປະມານຂອງທຶນຊ່ວຍເຫຼືອຮອບໃຫມ່ໂຄງການ RAI3E ເພື່ອເປັນພື້ນຖານໃຫ້ແກ່ບາດກ້າວຕໍ່ໄປໃນການເຈລະຈາທຶນຊ່ວຍເຫຼືອກັບກອງທຶນໂລກ, ແຕ່ຕ້ອງໄດ້ຮັບຮູ້ວ່າຄວາມບໍ່ແນ່ນອນດ້ານເສດຖະກິດໃນປະຈຸບັນເນື່ອງຈາກການລະບາດຂອງພະຍາດ COVID-19 ອາດຈະສົ່ງຜົນກະທົບຕໍ່ການສະໜັບສະໜູນທຶນປະກອບສ່ວນຂອງລັດຖະບານ. ສະມາຊິກ CCM ໄດ້ສະເໜີວ່າ ຖ້າຄຳໝັ້ນສັນຍາໃນການປະກອບສ່ວນທຶນຂອງລັດຖະບານແມ່ນມີຄວາມສ່ຽງທີ່ຈະບໍ່ສາມາດຕອບສະໜອງຕາມຈຳນວນທີ່ລະບຸໄວ້ ແລະ ມີຜົນກະທົບຢ່າງຫຼວງຫຼາຍຕໍ່ການຈັດສັນທຶນໃນຫຼາຍອົງປະກອບຂອງແຜນງານທີ່ໄດ້ຈັດສັນໄວ້ໃນໂຄງການ RAI3E, ບັນຫາດັ່ງກ່າວນີ້ ຈະຕ້ອງໄດ້ນຳມາປຶກສາຫາກັນກັບ CCM ຄືນໃໝ່ ເພື່ອການຕັດສິນໃຈຕໍ່ໄປ.

**ວາລະກອງປະຊຸມທີ 3: ທົບທວນແລະປະກອບຄໍາເຫັນຕໍ່ບົດລາຍງານຂອງການລົງຕິດຕາມກວດກາວຽກງານ ທີ່ແຂວງສະຫວັນນະເຂດ ລະຫວ່າງວັນທີ 27-30 ກໍລະກົດ 2020**

ຍ້ອນເວລາບໍ່ພຽງພໍ, ກອງປະຊຸມໄດ້ຕົກລົງຍົກເລີກວາລະການທົບທວນແລະປະກອບຄໍາເຫັນຕໍ່ບົດລາຍງານຂອງການລົງຕິດຕາມກວດກາວຽກງານ ທີ່ແຂວງສະຫວັນນະເຂດ ລະຫວ່າງວັນທີ 27-30 ກໍລະກົດ 2020 ແລະ ໄດ້ແນະນໍາຜູ້ເຂົ້າຮ່ວມກອງປະຊຸມໃຫ້ໄປອ່ານບົດລາຍງານດັ່ງກ່າວຕາມພາຍຫຼັງ.

ກອງປະຊຸມຄັ້ງນີ້ ໄດ້ສໍາເລັດໃນເວລາ 17:00 ຂອງວັນທີ 23 ກັນຍາ 2020.

ນະຄອນຫຼວງວຽງຈັນ, ວັນທີ 06 ຕຸລາ 2020

**ປະທານກອງປະຊຸມ**

ທ່ານ ນາງ ດຣ. ສຸລານີ ຈັນສີ
ຮອງຫົວໜ້າກອງສົ່ງເສີມສຸຂະພາບຊຸມຊົນ
ອົງການກາແດງລາວ
ຮອງປະທານຄະນະກໍາມະການປະສານງານກອງທຶນໂລກ

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ບຸດສາລີ ລັດຕະນະ
ຜູ້ປະສານງານ ແລະ ການເງິນ
ກອງເລຂາຄະນະກໍາມະການປະສານງານກອງທຶນໂລກ